ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 15862/ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 18 ກໍລະກົດ 2018

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກົມຂົນສົ່ງ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 295/ນຍ, ລົງວັນທີ 04 ກັນຍາ 2017;
- ອີງໃຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 415/ຍທຂ.ກຈພ, ລົງວັນທີ 4/7/2018
- ອີງຕາມ ການເຫັນດີເປັນເອກະພາບ ຂອງຄະນະປະຈຳພັກກະຊວງ ຄັ້ງວັນທີ 29/05/2018

## ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ອອກຂໍ້ຕົກລົງ:

## ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບ ການຈັດຕັ້ງ, ແບບແຜນວິທີເຮັດວຽກຂອງກົມຂົນສົ່ງ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ແນ່ໃສ່ຈັດຕັ້ງປະຕິບັດວຽກງານ ຂົນສົ່ງໃຫ້ມີປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມຂົນສົ່ງ ຂຽນເປັນຕົວອັກສອນຫຍໍ້ວ່າ "ກຂສ" ( ເປັນພາສາຝຣັ່ງ Département des Transports "DT" ) ແມ່ນກົງຈັກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ໃນການຄົ້ນຄ້ວາ, ວາງແຜນ ແລະ ຄຸ້ມຄອງມະຫາພາກ ວຽກງານຂົນສົ່ງທາງບົກ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄົ້ນຄວ້າ, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ແຜນຍຸດທະສາດຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີກ່ຽວກັບວຽກງານຂົນສົ່ງໃຫ້ເລິກເຊິ່ງ;
2. ສ້າງແຜນຍຸດທະສາດ ແລະ ນະໂຍບາຍ, ແຜນການ, ແຜນງານ ແລະ ໂຄງການລະອຽດໃນແຕ່ລະໄລຍະ ແລະ ຊີ້ນໍາໃນການຈັດຕັ້ງປະຕິບັດ ວຽກງານຂົນສົ່ງທາງບົກ, ໂລຊິດສະຕິກ, ພາຫະນະ ແລະ ກົນຈັກ, ການຈະລາຈອນທາງບົກ, ການຂັບຂີ່ ແລະ ຄວາມປອດໄພທາງຫຼວງ ແລະ ການຄຸ້ມຄອງ ທຸລະກິດກ່ຽວກັບການຂົນສົ່ງ, ການຈະລາຈອນ ທາງບົກ ແລະ ສະມາຄົມຜູ້ຂົນສົ່ງ, ສະມາຄົມ ແລະ ມູນນິທິກ່ຽວກັບການຈະລາຈອນທາງບົກ ເພື່ອນໍາສະເໜີຕໍ່ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງ;
3. ຜັນຂະຫຍາຍແນວທາງນະໂຍບາຍ ຂອງພັກ-ລັດ ກໍຄືຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ບັນດາສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ ກ່ຽວກັບວຽກງານ ຂົນສົ່ງທາງບົກ, ໂລຊິດສະຕິກ, ພາຫະນະ ແລະ ກົນຈັກ, ການຈະລາຈອນທາງບົກ, ການຂັບຂີ່ ແລະ ຄວາມປອດໄພທາງຫຼວງ ແລະ ການຄຸ້ມຄອງທຸລະກິດກ່ຽວກັບການຂົນສົ່ງ, ການຈະລາຈອນ ທາງບົກ ແລະ ສະມາຄົມຜູ້ຂົນສົ່ງ, ສະມາຄົມ ແລະ ມູນນິທິກ່ຽວກັບການຈະລາຈອນທາງບົກ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
4. ຄົ້ນຄວ້າ, ຮ່າງ ນະໂຍບາຍ, ກົດໝາຍ, ລະບຽບການ, ກໍານົດໝາຍ ແລະ ມາດຕະຖານ ເຕັກນິກ ກ່ຽວກັບ ວຽກງານ ຂົນສົ່ງທາງບົກ, ໂລຊິດສະຕິກ, ພາຫະນະ ແລະ ກົນຈັກ, ການຈະລາຈອນທາງບົກ, ການຂັບຂີ່ ແລະ ຄວາມປອດໄພທາງຫຼວງ ແລະ ການຄຸ້ມຄອງທຸລະກິດກ່ຽວກັບການຂົນສົ່ງ, ການຈະລາຈອນທາງບົກ ແລະ ສະມາຄົມຜູ້ຂົນສົ່ງ, ສະມາຄົມ ແລະ ມູນນິທິກ່ຽວກັບການຈະລາຈອນທາງບົກ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມກວດກາ ເຕັກນິກການຂົນສົ່ງ, ມາດຕະຖານເຕັກນິກຂອງຍານພາຫະນະຂົນສົ່ງ ທຸກປະເພດ ທີ່ເຄື່ອນໄຫວໃນ ສປປ ລາວ;
6. ພົວພັນຮ່ວມມື ພາຍໃນ, ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານຂົນສົ່ງ, ໂລຊິດສະຕິກ, ຍານພາຫະນະ, ກົນຈັກ, ຈະລາຈອນທາງບົກ, ຂັບຂີ່ ແລະ ຄວາມປອດໄພທາງຫຼວງ ແລະ ຖະໜົນ ໃນການແລກປ່ຽນ ບົດຮຽນ, ຂໍ້ມູນຂ່າວສານ ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ, ເພື່ອກໍ່ສ້າງ, ບໍາລຸງ ແລະ ຍົກລະດັບ ພະນັກງານ ພ້ອມທັງ ຍາດແຍ່ງ ການຊ່ວຍເຫຼືອລ້າ ແລະ ກູ້ຢືມ ເຂົ້າໃນການພັດທະນາວຽກງານຂົນສົ່ງທາງບົກ;
7. ຂຶ້ນແຜນ, ຄຸ້ມຄອງ ແລະ ນໍາໃຊ້ງົບປະມານ ທີ່ລັດຖະບານ ອະນຸມັດໃຫ້ມີປະສິດທິຜົນສູງ, ຂຸດຄົ້ນ, ຄຸ້ມຄອງ ແລະ ນໍາໃຊ້ລາຍຮັບວິຊາການ ຕາມການອະນຸມັດຂອງລັດຖະມົນຕີ;
8. ກວດກາ, ກວດການ ແລະ ຄຸ້ມຄອງ ການເຄື່ອນໄຫວຮອບດ້ານ ຂອງໜ່ວຍວິຊາການ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ແລະ ຫົວໜ່ວຍທຸລະກິດຂົນສົ່ງ ແລະ ຂົນສົ່ງສະເພາະ ໂດຍອີງໃສ່ກົດໝາຍ, ລະບຽບການ, ຂໍ້ກໍານົດກົດລະບຽບ, ກໍານົດໝາຍ ແລະ ມາດຕະຖານເຕັກນິກ ທີ່ກະຊວງ ຍທຂ ວາງອອກ;
9. ສະຫຼຸບຕີລາຄາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ແຜນການ ແລະ ງົບປະມານກ່ຽວກັບວຽກງານຂົນສົ່ງທາງບົກ, ໂລຊິດສະຕິກ, ການຄຸ້ມຄອງຍານພາຫະນະ ແລະ ກົນຈັກ, ການຈະລາຈອນທາງບົກ, ການຂັບຂີ່ ແລະ ຄວາມປອດໄພທາງຫຼວງ;